**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ເອກະພາບ ວັດທະນາຖາວອນ**

---

# <u>ໃບຄໍາຮ້ອງ</u>

ຮຽນ: ທ່ານຫົວໜ້າຫ້ອງການ ກອງບັນຊາການກະຊວງປ້ອງກັນຄວາມສະຫງົບ

ເລື່ອງ: ຂໍຄວາມຊ່ວຍເຫຼືອຕິດຕາມຄົນຫາຍ

ຂ້າພະເຈົ້າ, ນາງ ຊຸຍມີງ, ບ້ານໂຄກນິນ, ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ເປັນພັນລະຍາຂອງ ທ່ານ ສົມບັດ ສົມພອນ.

ມີຈຸດປະສົງຂໍຮຽນມາຍັງທ່ານ ເພື່ອຂໍຄວາມຊ່ວຍເຫຼືອໃນການຕາມຫາຕົວຄົນຫາຍ ເຊິ່ງສາມີຂ້າພະເຈົ້າ ໄດ້ຫາຍຕົວໄປໃນຕອນແລງຂອງວັນທີ 15/12/2012, ເວລາ 18.00 ຈົນເຖິງປັດຈຸບັນ ຜູ້ກ່ຽວບໍ່ໄດ້ກັບບ້ານ. ພວກຂ້າພະເຈົ້າ, ໄດ້ແຈ້ງຄົນຫາຍໃຫ້ແກ່ເຈົ້າໜ້າທີ່ຕໍາຫຼວດ ໃນວັນທີ 16/12/2012 ຕອນເຊົ້າ ພວກຂ້າພະເຈົ້າໄດ້ຮ້ອງຂໍເບິ່ງກ້ອງວົງຈອນປິດ ທີ່ຫ້ອງການກອງບັນຊາການຕໍາຫຼວດນະຄອນຫຼວງແລ້ວ ພວກເຮົາພົບເຫັນລາວໃນກ້ອງວົງຈອນປິດດັ່ງກ່າວ ໃນເວລາ 18.03 ນາທີ ຂອງວັນທີ 15/12/2012 ທີ່ປ້ອມຕໍາຫຼວດຫຼັກ 3 ເຫດການດັ່ງກ່າວ, ທ່ານ ສົມບັດ ສົມພອນ ຖືກຢຸດລົດໂດຍຕໍາຫຼວດຈາລະຈອນ ແລະເອີ້ນລົງລົດ, ຕໍ່ມາ ໄດ້ມີຜູ້ຊາຍ 1 ຄົນ ຂີ່ລົດຈັກມາ ແລະບໍ່ດົນເທົ່າໃດນາທີຜູ້ຊາຍຄົນນັ້ນໄດ້ຂີ່ລົດຈີບ ທະບຽນ ກກ 2624 ຂອງ ທ່ານ ສົມບັດ ອອກໄປ. ຫຼາຍນາທີຕໍ່ມາ ໄດ້ມີລົດກະບະມາຈອດແລະເອົາຕົວຂຶ້ນລົດໄປ. ສ່ວນລົດຈັກຄັນດັ່ງກ່າວໄດ້ຖືກຈອດໄວ້ໃນເຫດການດົນສົມຄວນຈຶ່ງມີຄົນມາເອົາໄປ. ປັດຈຸບັນນີ້, ຂ້າພະເຈົ້າຍັງບໍ່ທັນໄດ້ຮັບຂ່າວຄາວຫຍັງຈາກ ຜູ້ເປັນສາມີເລີຍ.

ດັ່ງນັ້ນ, ຈຶ່ງຂຽນຈົດໝາຍສະບັບນີ້ເພື່ອຮ້ອງຂໍຄວາມຊ່ວຍເຫຼືອຈາກທ່ານ ເພື່ອຊອກຫາເບາະແສ ຫຼືແຫຼ່ງຂໍ້ມູນຕ່າງໆຊ່ວຍຂ້າພະເຈົ້າດ້ວຍ.

ຮຽນມາຍັງທ່ານດ້ວຍຄວາມເຄົາລົບນັບຖືຢ່າງສູງ

ວຽງຈັນ, ວັນທີ 17/12/2012

ຜູ້ຮ້ອງຂໍ

..............................

ອີງ ຊຸຍມີງ